ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0346/ກປ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2022

# ຄຳສັ່ງ

## ວ່າດ້ວຍ ການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກຳປຸງແຕ່ງ ກະສິກຳ ຂັ້ນຕົ້ນ, ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ

ເຖິງ: - ທ່ານ ຫົວໜ້າ ຫ້ອງການ, ກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ບົດບັນທຶກ ມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 11 ພະຈິກ 2021.

ໃນໄລຍະຜ່ານມາ, ລັດຖະບານໄດ້ຖືເອົາວຽກງານການຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ເປັນວຽກບຸລິມະສິດ ໃນການພັດທະນາເສດຖະກິດ-ສັງຄົມ ແນໃສ່ປັບປຸງ, ຍົກລະດັບຄຸນນະພາບການຜະລິດ, ສ້າງມູນຄ່າເພີ່ມ, ສ້າງຜະລິດຕະພັນທີ່ມີຄຸນນະພາບ ແລະ ໄດ້ມາດຕະຖານ ເທື່ອລະກ້າວ, ສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະ ພັດທະນາໄປ ຕາມທິດສີຂຽວ ແລະ ຍືນຍົງ.

ໃນປັດຈຸບັນ ລັດຖະບານ ໄດ້ຕົກລົງມອບວຽກງານອຸດສາຫະກຳປຸງແຕ່ງ ກະສິກຳ ແລະ ປ່າໄມ້ ໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ຊຶ່ງປະກອບມີ: 1) ໂຮງສີເຂົ້າ; 2) ໂຮງງານປຸງແຕ່ງແປ້ງມັນຕົ້ນ; 3) ໂຮງງານປຸງແຕ່ງອ້ອຍ; 4) ໂຮງງານຂ້າສັດ; 5) ໂຮງງານຜະລິດອາຫານສັດ; 6) ໂຮງງານຜະລິດວັກຊີນ, ຢາປາບສັດຕູພືດ, ຢາປົວສັດ ແລະ ເຄື່ອງມືສັດຕະວະແພດ; 7) ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນິເຈີ ແລະ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງທຸກປະເພດ; 8) ໂຮງງານປຸງແຕ່ງຢາງພາລາ; 9) ໂຮງງານຜະລິດຝຸ່ນຊີວະພາບ ແລະ ອົງຄະທາດ; 10)ໂຮງງານຄັດແຍກເມັດພັນ ແລະ ຫຸ້ມຫໍ່ ຜົນຜະລິດ ກະສິກຳ ແລະ 11) ໂຮງງານຜະລິດເຄື່ອງມື ແລະ ກົນຈັກກະສິກຳ.

ເພື່ອຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ບັນດາໂຮງງານອຸດສາຫະກຳປຸງແຕ່ງກະສິກຳຂັ້ນຕົ້ນ, ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມພາລະບົດບາດໃໝ່ ຂອງຂະແໜງກະສິກຳ ແລະ ປ່າໄມ້.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ກົມປູກຝັງ ຮັບຜິດຊອບຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງສີເຂົ້າ, ໂຮງງານປຸງແຕ່ງແປ້ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ, ໂຮງງານຜະລິດຢາປາບສັດຕູພືດ, ໂຮງງານຜະລິດເຄື່ອງມື ແລະ ກົນຈັກຮັບໃຊ້ການປູກຝັງ-ກະສິກຳ, ໂຮງງານປຸງແຕ່ງພືດ ແລະ ຜະລິດຕະພັນພືດອື່ນໆ ໃນຂອບເຂດທົ່ວປະເທດ;
2. ໃຫ້ກົມລ້ຽງສັດ ແລະ ການປະມົງ ຮັບຜິດຊອບຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານຂ້າສັດ, ໂຮງງານຜະລິດອາຫານສັດ, ໂຮງງານຜະລິດຢາວັກຊີນ, ໂຮງງານຜະລິດຢາປົວສັດ ແລະ ເຄື່ອງມືສັດຕະວະແພດ,

ໂຮງງານຜະລິດເຄື່ອງມື ແລະ ກົນຈັກຮັບໃຊ້ການລ້ຽງສັດ, ສັດຕະວະແພດ, ໂຮງປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ ໃນຂອບເຂດທົ່ວປະເທດ;

3. ໃຫ້ກົມປ່າໄມ້ ຮັບຜິດຊອບຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງງານເຟີນີເຈີ, ໂຮງງານຜະລິດເຈ້ຍໂດຍນຳໃຊ້ໄມ້ ເປັນວັດຖຸດິບ, ໂຮງງານເຟີນີເຈີແບບຄອບຄົວ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ໂຮງງານຜະລິດຖ່ານ ໃນຂອບເຂດທົ່ວປະເທດ;

4. ໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮັບຜິດຊອບ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານຜະລິດຝຸ່ນ (ຝຸ່ນຊີວະພາບ, ຝຸ່ນອິງຄະທາດ ແລະ ຝຸ່ນວິທະຍາສາດ) ໃນຂອບເຂດທົ່ວປະເທດ;

5. ໃຫ້ກົມສົ່ງເສີມກະສິກຳ ແລະ ສະຫະກອນ ຮັບຜິດຊອບຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານປຸງແຕ່ງກະສິກຳຂະໜາດນ້ອຍ ລະດັບຄອບຄົວ, ກຸ່ມ, ສະຫະກອນ ພ້ອມທັງ ສົ່ງເສີມເຕັກນິກການອົບ, ການຕາກ, ໂຮງຄັດແຍກເມັດພັນ, ຈັດເກຣດ, ຫຸ້ມຫໍ່ ແລະ ແປຮູບ-ປຸງຣົດ ຜົນຜະລິດກະສິກຳ ເພື່ອສ້າງມູນຄ່າເພີ່ມ ໃນຂອບເຂດທົ່ວປະເທດ;

6. ໃຫ້ກົມກວດກາປ່າໄມ້ ສົມທົບພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ກວດກາການດຳເນີນທຸລະກິດໂຮງງານອຸດສາຫະກຳປຸງແຕ່ງ ໄມ້, ເຄື່ອງປ່າຂອງດົງ ແລະ ຢາງພາລາ; ກວດກາ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຄ້າງຢູ່ໂຮງງານປຸງແຕ່ງ ໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງງານເຟີນີເຈີ, ໂຮງງານຜະລິດເຈ້ຍໂດຍນຳໃຊ້ໄມ້ ເປັນວັດຖຸດິບ ແລະ ໂຮງງານເຟີນີເຈີແບບຄອບຄົວ, ສາງເກັບມ້ຽນໄມ້, ຮ້ານຂາຍໄມ້, ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ໂຮງງານຜະລິດຖ່ານ, ໂຮງງານຫວາຍ, ໄມ້ປ່ອງ, ໂຮງງານທີ່ໃຊ້ໄມ້ເປັນພະລັງງານ ເຊັ່ນ: ເຕົາດິນຈີ່, ເຕົາຕົ້ມເກືອ, ໂຮງງານປຸງແຕ່ງ ຢາງພາລາ ຖ້າບໍ່ມີເອກະສານຢັ້ງຢືນແຫຼ່ງທີ່ມາຂອງວັດຖຸດິບຈະແຈ້ງ, ຖືກຕ້ອງ ແລະ ຄົບຖ້ວນ ແມ່ນໃຫ້ປະຕິບັດຕາມມາດຕະການ ຍຶດ ຫຼື ອາຍັດ ແລ້ວດຳເນີນການສືບສວນ-ສອບສວນ ແລະ ແກ້ໄຂຕາມກົດໝາຍ ແລະ ລະບຽບການ;

7. ໃຫ້ກົມປ່າໄມ້ ແລະ ກົມກວດກາປ່າໄມ້ ຄົ້ນຄວ້າກຳນົດແຜນດຸ່ນດ່ຽງ ໃນການສະໜອງວັດຖຸດິບທີ່ສາມາດສະໜອງຈາກປ່າທຳມະຊາດ ແລະ ປ່າປູກ ລວມທັງເຄື່ອງປ່າຂອງດົງ. ຈາກນັ້ນ, ກຳນົດທ່າແຮງໃນການພັດທະນາອຸດສາຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ຄືນໃໝ່ ຢ່າງມີຈຸດສຸມ;

8. ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຮັບຜິດຊອບ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານ ແລະ ເຄື່ອງຄັດແຍກເມັດພັນ, ເຄື່ອງອົບເມັດພັນ, ສາງເຢັນເກັບເມັດພັນພືດ; ຄົ້ນຄວ້າ ແລະ ພັດທະນາເຕັກນິກ, ເຕັກໂນໂລຊີການປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ເພື່ອສະໜອງຂໍ້ມູນທາງດ້ານວິທະຍາສາດ, ເຕັກນິກໃໝ່ ແລະ ເຕັກໂນໂລຊີໃນການປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ໃຫ້ໄດ້ຮັບຜົນດີ ຢ່າງມີປະສິດທິຜົນສູງ ແລະ ສຶກສາ, ຄົ້ນຄວ້າ, ວິເຄາະວິໄຈ ສະພາບການປຸງແຕ່ງ ຂອງບັນດາໂຮງຈັກ ແລະ ໂຮງງານປຸງແຕ່ງກະສິກຳຂັ້ນຕົ້ນ, ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໃນໄລຍະຜ່ານມາ ໂດຍຍົກໃຫ້ເຫັນໄດ້ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ວິທີທາງແກ້ໄຂ ພ້ອມທັງ ສະເໜີແຜນການໃນພັດທະນາໃນຕໍ່ໜ້າ ຕາມທິດສີຂຽວ ແລະ ຍືນຍົງ;

9. ໃຫ້ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ກົມປ່າໄມ້, ກົມກວດກາປ່າໄມ້, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ໃຫ້ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດດັ່ງນີ້:

   9.1 ເກັບກຳຂໍ້ມູນ, ຂຶ້ນບັນຊີ ແລະ ປະເມີນຕີລາຄາ ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບັນຫາ, ມາດຕະການແກ້ໄຂ ແລະ ແຜນການຈັດຕັ້ງປະຕິບັດ ໃນຕໍ່ໜ້າ ຂອງບັນດາໂຮງງານປຸງແຕ່ງ ເພື່ອສະເໜີ ດັດສົມ ຕາມຄວາມເໝາະສົມກັບທ່າແຮງ ສະໜອງວັດຖຸດິບ ແລະ ເຮັດໃຫ້ການຜະລິດ ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ ໃນແຕ່ລະທ້ອງຖິ່ນ; ໑.໗

9.2 ຄົ້ນຄວ້າ ແລະ ນຳສະເໜີ ສ້າງ, ປັບປຸງ, ລົບລ້າງ ຫຼື ຍົກເລີກ ນິຕິກຳ ກ່ຽວກັບ ການຄຸ້ມຄອງໂຮງງານປຸງແຕ່ງ, ຄຸ້ມຄອງ ແລະ ຕິດຕາມ ສິນເຂົ້າ-ສິນອອກ ຂອງວັດຖຸດິບ ແລະ ຜະລິດຕະພັນ, ອອກ, ໂຈະ ຫຼື ຍົກເລີກ ໃບອະນຸຍາດ ສ້າງຕັ້ງໂຮງງານ ແລະ ໃບອະນຸຍາດດຳເນີນທຸລະກິດປຸງແຕ່ງກະສິກຳຂັ້ນຕົ້ນ ແລະ ປຸງແຕ່ງ ໄມ້, ເຄື່ອງປ່າຂອງດົງ ແລະ ຢາງພາລາ ຕາມພາລະບົດບາດໃໝ່ ຂອງຕົນ ໃນຂອບເຂດທົ່ວປະເທດ;

9.3 ຊຸກຍູ້ສົ່ງເສີມການລົງທຶນໃນຂະແໜງອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ຕາມທິດທັນເປັນອຸດສາຫະກຳສີຂຽວ ສະອາດ ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ ພ້ອມດຽວກັນນັ້ນ ກໍ່ຕ້ອງຊຸກຍູ້ສົ່ງເສີມດ້ານການເຂົ້າຫາແຫຼ່ງທຶນ, ການນຳໃຊ້ເຄື່ອງຈັກ ແລະ ເຕັກໂນໂລຊີ, ການສ້າງມູນຄ່າເພີ່ມ, ຝຶກອົບຮົມເຕັກນິກວິຊາການ, ການສະໜອງຂໍ້ມູນ-ຂ່າວສານ, ການໃຫ້ຄຳປຶກສາ, ການສະໜອງແຮງງານ, ການໃຫ້ບູລິມະສິດ, ການຕະຫຼາດ, ນະໂຍບາຍພາສີ-ອາກອນ, ການກໍ່ສ້າງພື້ນຖານໂຄງລ່າງ, ການສ້າງຕັ້ງກຸ່ມຜະລິດ;

9.4 ຊຸກຍູ້ສົ່ງເສີມດ້ານ ການເຂົ້າຫາແຫຼ່ງທຶນ, ການນຳໃຊ້ເຄື່ອງຈັກ ແລະ ເຕັກໂນໂລຊີ, ການພັດທະນາອຸດສາຫະກຳສີຂຽວ, ການສ້າງມູນຄ່າເພີ່ມ, ວິຊາການ, ການຝຶກອົບຮົມ, ການສະໜອງຂໍ້ມູນ-ຂ່າວສານ, ການໃຫ້ຄຳປຶກສາ, ການສະໜອງແຮງງານ, ການໃຫ້ບູລິມະສິດ, ການຕະຫຼາດ, ນະໂຍບາຍພາສີ-ອາກອນ, ການກໍ່ສ້າງພື້ນຖານໂຄງລ່າງ, ການສ້າງຕັ້ງກຸ່ມຜະລິດ, ການສ້າງຕັ້ງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງການຜະລິດ ເພື່ອປ້ອນໂຮງງານອຸດສາຫະກຳປຸງແຕ່ງກະສິກຳຂັ້ນຕົ້ນ, ປຸງແຕ່ງ ໄມ້, ເຄື່ອງປ່າຂອງດົງ ແລະ ຢາງພາລາ;

10. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເຈົ້າການ ປະສານສົມທົບກັບ ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ ເພື່ອເຮັດໜ້າທີ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

10.1. ດຳເນີນການ ມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ຕາມເນື້ອໃນ ບົດບັນທຶກ ມອບ-ຮັບ ລົງວັນທີ 11 ພະຈິກ 2021. ບັນດາໂຮງງານປຸງແຕ່ງທີ່ ມອບ-ຮັບ ປະກອບມີ: 1) ໂຮງສີເຂົ້າ; 2) ໂຮງງານປຸງແຕ່ງແປ້ງມັນຕົ້ນ; 3) ໂຮງງານປຸງແຕ່ງອ້ອຍ; 4) ໂຮງງານຂ້າສັດ; 5) ໂຮງງານຜະລິດອາຫານສັດ; 6) ໂຮງງານຜະລິດວັກຊີນ, ຢາປາບສັດຕູພືດ, ຢາປົວສັດ ແລະ ເຄື່ອງມືສັດຕະວະແພດ; 7) ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນີເຈີ ແລະ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງທຸກປະເພດ; 8) ໂຮງງານປຸງແຕ່ງຢາງພາລາ; 9) ໂຮງງານຜະລິດຝຸ່ນຊີວະພາບ ແລະ ອິງຄະທາດ; 10)ໂຮງງານຄັດແຍກເມັດພັນ ແລະ ຫຸ້ມຫໍ່ ຜົນຜະລິດ ກະສິກຳ ແລະ 11) ໂຮງງານຜະລິດເຄື່ອງມື ແລະ ກົນຈັກກະສິກຳ ໃຫ້ສຳເລັດພາຍໃນວັນທີ 15 ມີນາ 2022;

10.2. ດຳເນີນ ການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບ ສະພາບ ຂອງໂຮງງານປຸງແຕ່ງກະສິກຳຂັ້ນຕົ້ນ, ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ລວມທັງເຕົາເຜົາຖ່ານ ໃຫ້ໄດ້ຂໍ້ມູນທີ່ຈະແຈ້ງ ຄື: 1) ລາຍຊື່ໂຮງງານ, ຂຶ້ນສະຖິຕິ ແລະ ແຍກປະເພດ, ຄວາມສາມາດໃນການຜະລິດແຕ່ລະຊະນິດ, ແຫຼ່ງວັດຖຸດິບສະໜອງໃຫ້ໂຮງງານ ສິນເຂົ້າ-ສິນອອກ ໃຫ້ລະອຽດ ແລ້ວລາຍງານການນຳ ກະຊວງ ແລະ ແຂວງ, ນະຄອນຫຼວງວຽງຈັນ; 2) ປະເມີນມາດຕະຖານຂອງໂຮງງານຄືນໃໝ່ ເພື່ອກຳນົດໂຮງງານທີ່ເໝາະສົມ ແລ້ວລາຍງານການນຳກະຊວງ ແລະ ແຂວງ ເພື່ອຊີ້ນຳ ແລະ ວາງມາດຕະການແກ້ໄຂທີ່ເໝາະສົມ;

10.3. ສຳຫຼວດ, ກວດກາຄືນ ທີ່ຕັ້ງໂຮງງານປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອວາງແຜນຈັດສັນໂຮງງານປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ; ພ້ອມທັງ ກວດກາ ທ່າແຮງການສະໜອງວັດຖຸດິບດ້ານໄມ້ ແລະ ເຄື່ອງປ່າຂອງດົງ ແລະ ຢາງພາລາ ເພື່ອເປັນຂໍ້ມູນພື້ນຖານ ໃຫ້ແກ່ການຈັດຕັ້ງປະຕິບັດ ນະໂຍບາຍສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳເຂົ້າໃນການປຸງແຕ່ງ;

10.4. ກຳນົດເຂດການຜະລິດທີ່ມີທ່າແຮງບົ່ມຊ້ອນ ເພື່ອສ້າງໂຮງງານປຸງແຕ່ງຜົນຜະລິດກະສິກຳ ພ້ອມກັນນັ້ນ, ກໍ່ໃຫ້ສ້າງຕັ້ງກຸ່ມ, ສະຫະກອນ ເພື່ອຜະລິດ ແລະ ສະໜອງວັດຖຸດິບທີ່ມີຄຸນນະພາບໃຫ້ໂຮງງານປຸງແຕ່ງຢ່າງພຽງພໍ ທາງດ້ານປະລິມານ ແລະ ຄຸນນະພາບ; ໒.໗

10.5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຢັ້ງຢືນ ໄມ້ ແລະ ເຄື່ອງປ່າຂອງດົງ ສົ່ງເຂົ້າ, ສົ່ງອອກ ແລະ ຄ້າງສາງ ພາຍໃນ ໂຮງງານປຸງແຕ່ງໄມ້, ໂຮງເລື່ອຍ, ໂຮງຊອຍ, ໂຮງເຟີນີເຈີ, ຮ້ານຂາຍໄມ້, ໂຮງງານປຸງແຕ່ງ ເຄື່ອງປ່າຂອງດົງ ແລະ ຢາງພາລາ ກໍຄືເຕົາເຜົາຖ່ານ;

10.6. ຊຸກຍູ້ສົ່ງເສີມ ສະມາຄົມ ຫຼື ກຸ່ມຜະລິດກະສິກໍາ, ກຸ່ມເກັບຊື້ເຄື່ອງປ່າຂອງດົງ ແລະ ຢາງພາລາ ທີ່ໄດ້ຜ່ານການຈັດຕັ້ງ ແລະ ເຄື່ອນໄຫວ ໃນໄລຍະຜ່ານມາ ເພື່ອສືບຕໍ່ ປັບປຸງ ສະມາຄົມ ຫຼື ກຸ່ມ ດັ່ງກ່າວ ໃຫ້ເປັນລະບົບຕ່ອງໂສ້ການຜະລິດຄົບຊຸດ ເພື່ອຄຸ້ມຄອງ ການຜະລິດ, ລາຄາ ແລະ ຕະຫຼາດ ໃຫ້ເປັນທໍາ ແລະ ຍືນຍົງ;

10.7. ໃຫ້ປັບປຸງກົງຈັກການຈັດຕັ້ງ ຂັ້ນທ້ອງຖິ່ນ ຂອງຕົນ ໃຫ້ສອດຄ່ອງ ຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021;

10.8. ກວດກາຄືນ ບົດວິພາກເສດຖະກິດ-ເຕັກນິກ ຂອງບັນດາຫົວໜ່ວຍທຸລະກິດທີ່ເຄື່ອນໄຫວກິດຈະການ ປຸງແຕ່ງກະສິກໍາຂັ້ນຕົ້ນ, ປຸງແຕ່ງໄມ້, ເຄື່ອງປ່າຂອງດົງ ແລະ ຢາງພາລາ ເພື່ອຕິດຕາມ, ຊຸກຍູ້ ໃຫ້ເຂົາເຈົ້າຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວ ຕາມແຜນການເຄື່ອນໄຫວກິດຈະການໂຮງງານ, ຄຸ້ມຄອງຂະບວນການປຸງແຕ່ງ ໃຫ້ຕິດພັນກັບແຜນການປູກພືດ, ການລ້ຽງສັດ, ການປູກໄມ້ ແລະ ການຄຸ້ມຄອງເຄື່ອງປ່າຂອງດົງ, ຄຸ້ມຄອງການນໍາເຂົ້າເຄື່ອງຈັກ, ອຸປະກອນ, ອາໄຫຼ່, ວັດຖຸດິບ ແລະ ວັດຖຸເຄິ່ງສໍາເລັດຮູບ, ຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມຂອງໂຮງງານ, ທີ່ສະໜອງວັດຖຸດິບໃຫ້ແກ່ການປຸງແຕ່ງ, ຊຸກຍູ້ໃຫ້ເຂົາເຈົ້າປະຕິບັດຕາມເຕັກນິກ ແລະ ຫຼັກການ ຕາມທິດທັນເປັນອຸດສາຫະກໍາສີຂຽວ ສະອາດ ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ ພ້ອມທັງ ຊຸກຍູ້ໃຫ້ມີ ສັນຍາຊື້-ຂາຍ ກັບກຸ່ມການຜະລິດວັດຖຸດິບ ເພື່ອສະໜອງໃຫ້ໂຮງງານປຸງແຕ່ງດັ່ງກ່າວ;

10.9. ສືບຕໍ່ເພີ່ມທະວີຈັດຕັ້ງປະຕິບັດ ບັນດາໜ້າວຽກຕ່າງໆ ທີ່ໄດ້ລະບຸໄວ້ໃນ ແຈ້ງການ ສະບັບເລກທີ 0104/ກປ, ລົງວັນທີ 13 ມັງກອນ 2022 ໃຫ້ສໍາເລັດ ແລ້ວສະຫຼຸບລາຍງານຜົນການສໍາຫຼວດເກັບກໍາຂໍ້ມູນຕົວຈິງ, ຈໍານວນສະຖິຕິ ແລະ ແຍກປະເພດ, ຄວາມສາມາດໃນການຜະລິດແຕ່ລະຊະນິດ, ແຫຼ່ງວັດຖຸດິບສະໜອງໃຫ້ໂຮງງານ ສົ່ງເຂົ້າ-ສົ່ງອອກ, ຕີລາຄາ ຜົນສໍາເລັດ, ຂໍ້ຄົງຄ້າງ ແລະ ສາເຫດ ພ້ອມທັງ ສະເໜີມາດຕະການແກ້ໄຂ ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ພາຍໃນວັນທີ **15 ມິຖຸນາ 2022;**

11. ມອບໃຫ້ ຫ້ອງການ, ກົມ ແລະ ສະຖາບັນ ອ້ອມຂ້າງກະຊວງ, ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມດຽວກັນ ກໍມອບໃຫ້ ກົມກວດກາ ເປັນໃຈກາງໃນການ ຕິດຕາມ ກວດກາ ແລະ ລາຍງານ ການຈັດຕັ້ງປະຕິບັດບັນດາໜ້າວຽກ ຂອງແຕ່ລະພາກສ່ວນ ທີ່ຖືກມອບໝາຍ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ມີການສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານການນໍາກະຊວງກະສິກໍາ ແລະ ປ່າໄມ້ ຊາບ ເປັນແຕ່ລະໄລຍະ ສາມເດືອນ, ຫົກເດືອນ ແລະ ປີ ເພື່ອພິຈາລະນາແກ້ໄຂ ໃຫ້ທັນກັບສະພາບການ;

12. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ. ຫ.ຫ

ລັດຖະມົນຕີ

ພ. ແພດ

ປອ. ເພັດ ພົມພິພັກ

<u>ບ່ອນນໍາສົ່ງ:</u>

1. ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອລາຍງານ);
2. ຫ້ອງວ່າການ ສນຍ 01 ສະບັບ (ເພື່ອລາຍງານ);
3. ກະຊວງອຸດສາຫະກໍາ ແລະ ການຄ້າ 01 ສະບັບ (ເພື່ອຮັບຊາບ);
4. ຫ້ອງວ່າການປົກຄອງແຂວງ, ນວ ບ່ອນລະ 01 ສະບັບ (ເພື່ອຊ່ວຍຊີ້ນໍາ);
5. ເກັບຮັກສາໄວ້ 01 ສະບັບ.